ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ກົມຈັດຕັ້ງ ແລະ ພະນັກງານ

ເລກທີ 1943 /ກຈພ

ນະຄອນຫຼວງວຽງຈັນ, ວັນທີ 24.8.2023.

# ແຈ້ງການ

ເຖິງ : - ຫ້ອງການກະຊວງ, ບັນດາກົມ, ສະຖາບັນ, ແລະ ທຽບເທົ່າສູນ ອ້ອມຂ້າງກະຊວງກະສິກຳ ແລະ ປ່າໄມ້;

- ບັນດາວິທະຍາໄລກະສິກຳ ແລະ ປ່າໄມ້, ໂຮງຮຽນຊົນລະປະທານຊັ້ນສູງທ່າງ່ອນ ທີ່ຂຶ້ນກັບ ກະຊວງກະສິກຳ ແລະ ປ່າໄມ້;
- ບັນດາພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ, ນະຄອນຫຼວງວຽງຈັນ.

**ເລື່ອງ: ຄັດເລືອກພະນັກງານເຂົ້າຮ່ວມສະໝັກທຶນການສຶກສາ " ຜູ້ນຳໜຸ່ມ (Young Leaders' Program)" ລະດັບປະລິນຍາໂທ ຫຼັກສູດ 01 ປີ, ທີ່ ປະເທດ ຍີ່ປຸ່ນ ປະຈຳສົກປີ 2023-2024.**

- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກົມຈັດຕັ້ງ ແລະ ພະນັກງານ ສະບັບ ເລກທີ 1617/ກປ, ລົງວັນທີ 29 ທັນວາ 2021;
- ອີງຕາມ ແຈ້ງການ ຂອງຫ້ອງການ, ກະຊວງພາຍໃນ ສະບັບເລກທີ 374/ຫກ, ລົງວັນທີ 15 ສິງຫາ 2023;
- ອີງຕາມ ການຄົ້ນຄວ້າ ແລະ ສະເໜີຂອງ ພະແນກຄຸ້ມຄອງ ແລະ ພັດທະນາຊັບພະຍາກອນມະນຸດ.

ກົມຈັດຕັ້ງ ແລະ ພະນັກງານ ຂໍຖືເປັນກຽດແຈ້ງມາຍັງທ່ານ ເພື່ອຄັດເລືອກເອົາພະນັກງານ-ລັດຖະກອນຜູ້ທີ່ມີເງື່ອນໄຂເໝາະສົມຈຳນວນ 01 ທ່ານ ເຂົ້າຮ່ວມສະໝັກທຶນການສຶກສາ " ຜູ້ນຳໜຸ່ມ (Young Leaders' Program)" ລະດັບປະລິນຍາໂທ ໃນຫົວຂໍ້: ການປົກຄອງ ຫຼັກສູດ 01 ປີ, ທີ່ ປະເທດ ຍີ່ປຸ່ນ ປະຈຳສົກປີ 2023-2024.

❖ **<u>ເງື່ອນໄຂ ແລະ ວິທີການສະໝັກ:</u>**

- ຜູ້ທີ່ຈະສະໝັກຕ້ອງຈົບການສຶກສາໃນລະດັບ ປະລິນຍາຕີ ຂຶ້ນໄປ ທັງພາຍໃນ ແລະ ຕ່າງປະເທດ;
- ຜູ້ທີ່ຈະສະໝັກຕ້ອງມີອາຍຸບໍ່ເກີນ 40 ປີ;
- ຜູ້ທີ່ຈະສະໝັກຕ້ອງເປັນພະນັກງານລັດຖະກອນຢ່າງໜ້ອຍ 03 ປີ ຂຶ້ນໄປ;
- ຜູ້ສະໝັກຕ້ອງມີຄວາມຮູ້ພາສາອັງກິດໃນລະດັບດີ ທັງພາກເວົ້າ, ຂຽນ, ຟັງ ແລະ ອ່ານ;
- ຜູ້ສະໝັກຕ້ອງໄດ້ເຮັດວຽກກ່ຽວກັບວຽກງານການບໍລິຫານຄຸ້ມຄອງລັດ ຫຼື ການປົກຄອງ;

❖ **ເອກະສານທີ່ຜູ້ສະໝັກຕ້ອງປະກອບມີດັ່ງລຸ່ມນີ້:**

1. ແບບຟອມສະໝັກ (Application form) ຕ້ອງໃຊ້ແບບຟອມຂອງປີ 2024 ເທົ່ານັ້ນ ແລະ ຕ້ອງຕື່ມແບບຟອມໃຫ້ຄົບທຸກຂັ້ນຕອນ;
2. ໜັງສືແນະນຳ ຫຼື ຄຳເຫັນ (Recommendation form) ຈາກການຈັດຕັ້ງຂອງຜູ້ສະໝັກ ແມ່ນໃຫ້ຫົວໜ້າກົມ, ສະຖາບັນ ເປັນຜູ້ຂຽນຕາມຄຳຖາມເຈາະຈົ້ມ ທີ່ຜູ້ໃຫ້ທຶນກຳນົດ ພ້ອມທັງ ລົງລາຍເຊັນຢັ້ງຢືນ;

3. ໜັງສືແນະນຳ ຫຼື ຄຳເຫັນ 02 ໃບ ( 2 Letters of Recommendation) ຄື: 1. ໃຫ້ຫົວໜ້າກົມ, ຫົວໜ້າສະຖາບັນມີຄຳເຫັນ, 2. ຄຳເຫັນຈາກ ອາຈານ ຫຼື ທີ່ປຶກສາ ໃນຕອນຮຽນໃນມະຫາວິທະຍາໄລ ເປັນຜູ້ມີຄຳເຫັນ ພ້ອມທັງລົງລາຍເຊັນຢັ້ງຢືນ;
4. ໃບຄະແນນ (Official Transcript) ແລະ ໃບປະກາດ (Official Diploma or Certificate of Graduation from University) ຕ້ອງໄດ້ຢັ້ງຢືນຄືນ (ຈ້ຳກາແດງ) ຈາກມະຫາວິທະຍາໄລ, ສະຖາບັນການສຶກສາທີ່ຕົນເອງຈົບມາ ຫຼື ກົມການສຶກສາຊັ້ນສູງ, ກະຊວງສຶກສາທິການ ແລະ ກິລາ;
5. ໃບຢັ້ງຢືນທຽບລະດັບພາສາອັງກິດ: TOEFL Ibt 79 ຫຼື IELTS 6.0 ຂຶ້ນໄປຍິ່ງເປັນການດີ, ຖ້າບໍ່ມີ ແມ່ນໃຊ້ໃບປະກາດ ແລະ ໃບຄະແນນ ຈົບພາສາອັງກິດລະດັບຊັ້ນສູງຂຶ້ນໄປ ປະກອບແທນໄດ້;
6. ເອກະສານຢັ້ງຢືນສະຖານະພົນລະເມືອງລາວ: ອັດສຳເນົາ ໜັງສືຜ່ານແດນ ຫຼື ບັດປະຈຳໂຕ;
7. ບົດຄວາມອະທິບາຍແຜນໃນອານາຄົດ ຂອງຜູ້ສະໝັກຫຼັງຈາກຈົບການສຶກສາ(Essay Explaining Applicant's Aspirations and Future Plans Following Program Completion) ໃຫ້ອະທິບາຍ ຫຼື ຂຽນຕາມຄວາມຄິດເຫັນຂອງຜູ້ສະໝັກໃຫ້ໄດ້ 500 ຄຳສັບ ຫຼື ຢ່າງໜ້ອຍ 03 ໜ້າເຈ້ຍ A4;
8. ຕອບບົດຄວາມ ຕາມຄຳຖາມເຈາະຈົ້ມຂອງຜູ້ໃຫ້ທຶນ ໃຫ້ຄົບແຕ່ລະຄຳຖາມ (Answer to each of designate essay questions)
9. ໃບຢັ້ງຢືນສະຂະພາບ (Certificate of Health) ໃຫ້ກວດຢູ່ໂຮງໝໍໃຫຍ່ຂອງລັດ ຫຼື ເອກະຊົນ ຫຼື ໂຮງໝໍແຂວງ ແລະ ຕ້ອງມີລາຍເຊັນ ແລະ ຕາປະທັບ ຂອງທ່ານໝໍ ຫຼື ໂຮງໝໍຢ່າງເປັນທາງການ.

**ໝາຍເຫດ:**

1. ຜູ້ສະໝັກຕ້ອງອ່ານຄຳແນະນຳການປະກອບເອກະສານສະໝັກທຶນໃຫ້ລະອຽດ ແລະ ຕື່ມຂໍ້ມູນໃສ່ແບບພິມທີ່ກຳນົດໃຫ້,ແບບພິມສະໝັກແລະຄຳແນະນຳເພີ່ມເຕີມສາມາດດາວໂຫຼດໄດ້ທີ່ https://www.mext.go.jp/en/policy/education/highered/title02/detail02/sdetail02/sdetail02/1374094.htm;
2. ທຸກແບບພິມຕ້ອງອັດສຳເນົາຈາກສະບັບແທ້ເປັນ 03 ສະບັບ ແຕ່ລະສະບັບຕ້ອງມີຮູບຕິດ;
3. ທຶນນີ້ມີຈຳນວນຈຳກັດພາກສ່ວນໃດ ນຳສົ່ງລາຍຊື່ກ່ອນ ແມ່ນຈະໄດ້ຮັບການພິຈາລະນາພິກ່ອນ;
4. ກະລຸນາສົ່ງໜັງສືນຳສົ່ງລາຍຊື່ໃຫ້ກົມຈັດຕັ້ງ ແລະ ພະນັກງານເພື່ອຄັດເລືອກແລ້ວສົ່ງໃຫ້ ກົມຄຸ້ມຄອງລັດຖະກອນ, ກະຊວງພາຍໃນ **ກ່ອນວັນທີ 25 ສິງຫາ 2023**, ສ່ວນແບບພິມສະໝັກທຶນ ແມ່ນບໍ່ນຳສົ່ງໃຫ້ກະຊວງພາຍໃນບໍ່ໃຫ້ກາຍວັນທີ 01 ກັນຍາ 2023(ວັນສຸກ, ເວລາ 16:00).

ສຳລັບລາຍລະອຽດເພີ່ມເຕີມ ແມ່ນໃຫ້ພົວພັນພະແນກຄຸ້ມຄອງ ແລະ ພັດທະນາຊັບພະຍາກອນມະນຸດ, ກົມຈັດຕັ້ງ ແລະ ພະນັກງານ: (ທ.ສົມເພັດອຸດອນ ດວງມາລາ) ໂທ: 021 415368, 020 52879569.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ພິຈາລະນາຕາມທາງຄວນດ້ວຍ.

**ຫົວໜ້າກົມ**

ກະຊວງກະສິກຳ ແລະ ປ່າໄມ້
ກົມຈັດຕັ້ງແລະພະນັກງານ

ບຸນທະວີ ໄຊຍະເພັດ

**ສຳເນົາປາສົ່ງ:**

- ພະແນກ ຄພຊ 01 ສະບັບ
- ເກັບມ້ຽນ 01 ສະບັບ